ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 01 ສປປ

ລົງວັນທີ 1/2/96

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍອົງການໄອຍະການທະຫານ

-------------

ອີງຕາມລັດຖະທຳມະນູນ ແຫ່ງ ສປປລາວ;

ອີງຕາມກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສປປລາວ;

ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ.

ປະທານປະເທດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ອອກລັດຖະບັນຍັດ

### ໝວດທີ I

### ບົດບັນຍັດທົ່ວໄປ

<u>ມາດຕາ 1</u>. ໜ້າທີ່ຂອງລັດຖະບັນຍັດວ່າດ້ວຍອົງການໄອຍະການທະຫານ

ລັດຖະບັນຍັດວ່າດ້ວຍອົງການໄອຍະການທະຫານ ກຳນົດລະບຽບການ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການທະຫານ ແນໃສ່ເພີ່ມທະວີນິຕິທຳ ແລະຄວາມເປັນລະບຽບຮຽບຮ້ອຍໃນກອງທັບ, ປົກປ້ອງຜົນປະໂຫຍດຂອງບັນດາການຈັດຕັ້ງຂອງກອງທັບ, ສິດ ແລະຜົນປະໂຫຍດອັນຊອບທຳຂອງນາຍ ແລະພົນທະຫານລວມທັງພະລະກອນ ແລະກຳມະກອນຂອງກອງທັບ.

<u>ມາດຕາ 2</u>. ທີ່ຕັ້ງ ແລະພາລະບົດບາດ

ອົງການໄອຍະການທະຫານ ແມ່ນການຈັດຕັ້ງໜຶ່ງຂອງກອງທັບປະຊາຊົນລາວ ທີ່ນອນຢູ່ໃນລະບົບຂອງອົງການໄອຍະການປະຊາຊົນ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

ອົງການໄອຍະການທະຫານປະຕິບັດພາລະບົດບາດຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍຢູ່ໃນກອງທັບປະຊາຊົນລາວໃຫ້ຖືກຕ້ອງ ແລະເປັນເອກະພາບໃນທົ່ວປະເທດ, ສຶກສາອົບຮົມນາຍ ແລະພົນທະຫານ, ພະລະກອນ ແລະ ກຳມະກອນຂອງກອງທັບ ໃຫ້ມີສະຕິເຄົາລົບກົດໝາຍ, ລະບຽບວິໄນຂອງກອງທັບ ແລະລະບຽບການດຳລົງຊີວິດຢູ່ໃນສັງຄົມ.

ອົງການໄອຍະການທະຫານຂຽນຊື່ຫຍໍ້ ເປັນຕົວອັກສອນວ່າ : ອອທ.

<u>ມາດຕາ 3</u>. ຫລັກການເຄື່ອນໄຫວ

ອົງການໄອຍະການທະຫານເຄື່ອນໄຫວບົນພື້ນຖານລັດຖະທຳມະນູນ ແລະກົດໝາຍ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ຮັບປະກັນການປະຕິບັດກົດໝາຍໃຫ້ຖືກຕ້ອງແລະເປັນເອກະພາບ.

## ໝວດທີ II
## ສິດ ແລະໜ້າທີ່ຂອງອົງການໄອຍະການທະຫານ

<u>ມາດຕາ 4</u>. ສິດຂອງອົງການໄອຍະການທະຫານ

ອົງການໄອຍະການທະຫານມີສິດດັ່ງນີ້:

1. ຕິດຕາມກວດກາທົ່ວໄປ;

2. ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ - ສອບສວນ;

3. ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີ ແລະການປະຕິບັດຄຳຕັດສິນຂອງສານທະຫານ;

4. ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຂັງ, ສະຖານທີ່ກັກຕົວ, ໃນເວລາປະຕິບັດໂທດຕັດອິດສະຫລະພາບ ແລະມາດຕະການບັງຄັບອື່ນໆຂອງສານທະຫານ.

<u>ມາດຕາ 5</u>. ການຕິດຕາມກວດກາທົ່ວໄປ

ການຕິດຕາມກວດກາທົ່ວໄປແມ່ນການຕິດຕາມກວດກາການປະຕິບັດກົດໝາຍຂອງບັນດາການຈັດຕັ້ງຂອງກອງທັບ, ຂອງນາຍ ແລະພົນທະຫານ, ພະລະກອນ ແລະກຳມະກອນຂອງກອງທັບ.

ໃນການຕິດຕາມກວດກາທົ່ວໄປນັ້ນໄອຍະການທະຫານມີສິດດັ່ງນີ້ :

1. ທວງເອົາມະຕິຄຳສັ່ງ ແລະນິຕິກຳອື່ນໆຂອງອົງການ ແລະບຸກຄົນ ຊຶ່ງໄດ້ກຳນົດໃນມາດຕາ 2 ຂອງລັດຖະບັນຍັດ ສະບັບນີ້ມາກວດກາ ເພື່ອໃຫ້ສອດຄ່ອງກັບລັດຖະທຳມະນູນ ແລະກົດໝາຍ;

2. ທວງເອົາມະຕິຄຳສັ່ງ, ຂໍ້ກຳນົດ, ລະບຽບການ, ເອກະສານຂໍ້ມູນຕ່າງໆ ທີ່ພົວພັນກັບການລະເມີດກົດໝາຍຂອງອົງການ ແລະບຸກຄົນທີ່ກ່າວມາຂ້າງເທິງເພື່ອມາກວດກາ ແລະມີສິດສະເໜີໃຫ້ອົງການເຫລົ່ານັ້ນ ດຳເນີນການກວດກາການເຄື່ອນໄຫວຂອງກົມກອງຂອງຕົນ ແລະຂອງການຈັດຕັ້ງທີ່ຂຶ້ນກັບຕົນ. ໃນການດຳເນີນການຕິດຕາມກວດການັ້ນ ຖ້າມີຄວາມຈຳເປັນໄອຍະການທະຫານມີສິດສະເໜີເອົາຜູ້ຊ່ຽວຊານມາໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາໃດໜຶ່ງທີ່ເກີດຂຶ້ນ;

3. ກວດກາການປະຕິບັດກົດໝາຍຂອງການຈັດຕັ້ງ ແລະບຸກຄົນດັ່ງກ່າວ ທີ່ກ່າວມາຂ້າງເທິງ ໃນກໍລະນີທີ່ມີຄຳຮ້ອງຟ້ອງ, ຄຳຮ້ອງທຸກຂອງນາຍ ແລະພົນທະຫານ, ພະລະກອນ, ກຳມະກອນຂອງກອງທັບ ແລະພົນລະເມືອງ ຫລືໃນກໍລະນີທີ່ມີຂໍ້ມູນກ່ຽວກັບການລະເມີດກົດໝາຍ;

4. ຮຽກເຊີນເອົາຕົວບຸກຄົນທີ່ກ່ຽວຂ້ອງມາອະທິບາຍເປັນລາຍລັກອັກສອນ ຫລືທາງປາກເປົ່າ ກ່ຽວກັບການລະເມີດກົດໝາຍ;

5. ສະເໜີລົດລ້າງມະຕິຄຳສັ່ງ, ຂໍ້ກຳນົດ, ລະບຽບ ແລະນິຕິກຳອື່ນໆຂອງກົມກອງທີ່ບໍ່ສອດ ຄ່ອງກັບກົດໝາຍ ຕໍ່ການຈັດຕັ້ງດັ່ງກ່າວ ຫລືຕໍ່ກັບຂັ້ນເທິງທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂ;

6. ດຳເນີນຄະດີຜູ້ທີ່ຖືກສົງໃສວ່າໄດ້ກະທຳຜິດທາງອາຍາຕາມລະບຽບການທີ່ໄດ້ກຳນົດໄວ້ໃນ ກົດໝາຍ, ສະເໜີໃຫ້ກົມກອງ, ບຸກຄົນທີ່ກ່ຽວຂ້ອງປະຕິບັດວິໄນດ້ານບໍລິຫານຕໍ່ຜູ້ລະເມີດກົດໝາຍ ຫລືຕໍ່ຜູ້ລະເມີດລະບຽບວິໄນຂອງກອງທັບ;

7. ສະເໜີຕໍ່ກົມກອງ, ຜູ້ບັງຄັບບັນຊາ, ອົງການຈັດຕັ້ງມະຫາຊົນທີ່ກ່ຽວຂ້ອງ ກ່ຽວກັບການ ຈຳກັດ ແລະລົບລ້າງການລະເມີດກົດໝາຍລວມທັງສາເຫດ ແລະເງື່ອນໄຂທີ່ພາໃຫ້ການກະທຳຜິດ ເກີດຂື້ນ.

**ມາດຕາ 6.** ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນຂອງ ເຈົ້າໜ້າທີ່ທະຫານ

ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນແມ່ນການ ເຄື່ອນໄຫວເພື່ອແນໃສ່ເຮັດໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານປະຕິບັດລະບຽບ ການດຳເນີນຄະດີອາຍາຢ່າງຖືກຕ້ອງ ແລະເຂັ້ມງວດ.

ໃນການຕິດຕາມກວດກາດັ່ງກ່າວໄອຍະການທະຫານມີສິດ:

1. ທວງເອົາສຳນວນຄະດີອາຍາ, ເອກະສານ ແລະຂໍ້ມູນຕ່າງໆ ກ່ຽວກັບການກະທຳຜິດຈາກ ອົງການສືບສວນ-ສອບສວນເພື່ອມາກວດກາ;

2. ເຂົ້າຮ່ວມການສອບສວນຄະດີອາຍາ ແລະໃນກໍລະນີທີ່ຈຳເປັນຈະດຳເນີນການສອບສວນ ດ້ວຍຕົນເອງກໍໄດ້;

3. ລົບລ້າງຄຳສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນທີ່ບໍ່ຖືກຕ້ອງຕາມກົດໝາຍຫລືບໍ່ມີເຫດ ຜົນ;

4. ໃຫ້ຄຳແນະນຳເປັນລາຍລັກອັກສອນກ່ຽວກັບການສືບສວນ-ສອບສວນຄະດີອາຍາ, ກ່ຽວ ກັບການສະກັດກັ້ນ ແລະການຕີຄວາມໝາຍການກະທຳຜິດ, ການປະຕິບັດມາດຕະການສືບສວນ- ສອບສວນ ແລະການຊອກຫາຜູ້ກະທຳຜິດ;

5. ອອກຄຳສັ່ງຈັບຕົວ, ກັກຂັງ, ພາຕົວ, ກວດຄົ້ນເຄຫະສະຖານ ຍົກເວັ້ນໃນການກະທຳຜິດ ເຊິ່ງໜ້າ ແລະໃນກໍລະນີຮີບດ່ວນ ຊຶ່ງເຈົ້າໜ້າທີ່ສືບສວນ-ສອບສວນສາມາດດຳເນີນມາດຕະການດັ່ງ ກ່າວໄດ້ໂລດ, ແຕ່ຕ້ອງລາຍງານໃຫ້ໄອຍະການຊາບພາຍໃນກຳນົດ 24 ຊົ່ວໂມງ, ອອກຄຳສັ່ງປ່ອຍ ຕົວພາງ ໂດຍມີການຮັບປະກັນ;

6. ຕໍ່ກຳນົດເວລາສືບສວນ-ສອບສວນ ແລະກຳນົດເວລາກັກຂັງພາງຕາມທີ່ໄດ້ບົ່ງໄວ້ໃນກົດ ໝາຍວ່າດ້ວຍການດຳເນີນຄະດີອາຍາ;

7. ສົ່ງສຳນວນຄະດີຄືນໃຫ້ອົງການສືບສວນ-ສອບສວນ ພ້ອມດ້ວຍຄຳແນະນຳ ກ່ຽວກັບການ ສືບສວນ-ສອບສວນເພີ່ມເຕີມ;

8. ສັ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ທີ່ໄດ້ລະເມີດກົດໝາຍໃນການດຳເນີນຄະດີຢຸດເຊົາ ການສືບສວນ-ສອບສວນ;

9. ເປີດການສອບສວນ, ຊັດມ້ຽນຄະດີ ຫລືໂຈະການດຳເນີນຄະດີ, ທຳການສັ່ງຟ້ອງຂື້ນສານ ແລະສົ່ງຄະດີໄປຍັງສານທະຫານທີ່ມີສິດອຳນາດ.

ຄຳສັ່ງ ແລະຄຳແນະນຳຂອງໄອຍະການທະຫານທຸກຂັ້ນທີ່ສອດຄ່ອງກັບລະບຽບການດຳເນີນຄະດີອາຍາແມ່ນມີຜົນບັງຄັບປະຕິບັດສຳລັບທຸກອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ ກໍຄືສຳລັບພະນັກງານສອບສວນຂອງອົງການໄອຍະການທະຫານທຸກຂັ້ນ.

<u>**ມາດຕາ 7**</u>. ການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີ ແລະການປະຕິບັດຄຳຕັດສິນຂອງສານທະຫານ

ການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີ ແລະການປະຕິບັດຄຳຕັດສິນຂອງສານທະຫານ ແມ່ນແນໃສ່ເຮັດໃຫ້ຄະດີຖືກດຳເນີນໄປຢ່າງຮອບດ້ານ, ຄົບຖ້ວນ ແລະພາວະວິໄສ, ເຮັດໃຫ້ຄຳຊີ້ຂາດ, ຄຳຕັດສິນ ແລະຄຳພິພາກສາຂອງສານທະຫານຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບການປະຕິບັດຢ່າງຖືກຕ້ອງ ແລະເຂັ້ມງວດ.

**ໃນການຕິດຕາມກວດກາດັ່ງກ່າວໄອຍະການທະຫານມີສິດ :**

1. ຮ້ອງຟ້ອງຄະດີແພ່ງ ທີ່ພົວພັນເຖິງການຈັດຕັ້ງຂອງກອງທັບເພື່ອປົກປ້ອງຜົນປະໂຫຍດຂອງກອງທັບ;
2. ເຂົ້າຮ່ວມການດຳເນີນຄະດີອາຍາໃນທີ່ປະຊຸມສານ, ຖະແຫລງໃຫ້ຄວາມເຫັນແກ່ສານ;
3. ສະເໜີໃຫ້ສານທະຫານຂັ້ນຂອງຕົນ ແລະສານທະຫານຂັ້ນລຸ່ມສົ່ງສຳນວນຄະດີໃຫ້ຕົນເພື່ອດຳເນີນການກວດກາ;
4. ສະເໜີຄັດຄ້ານຄຳຊີ້ຂາດ, ຄຳຕັດສິນທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດຂອງສານທະຫານຂັ້ນຂອງຕົນ ຫລືສານທະຫານຂັ້ນລຸ່ມ ທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ ຫລືບໍ່ມີເຫດຜົນ;
5. ສະເໜີຄັດຄ້ານຄຳຊີ້ຂາດ, ຄຳຕັດສິນ ຫລືຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດຂອງສານທະຫານຂັ້ນຂອງຕົນ ຫລືສານທະຫານຂັ້ນລຸ່ມ ຕາມລະບຽບການຂອງສານຂັ້ນຕິດຕາມກວດກາ ແລະສະເໜີໂຈະການປະຕິບັດຄຳຊີ້ຂາດ, ຄຳຕັດສິນ ຫລືຄຳພິພາກສາດັ່ງກ່າວຂອງສານທະຫານດ້ວຍການອອກຄຳສັ່ງເປັນລາຍລັກອັກສອນ;
6. ສະເໜີຄັດຄ້ານຄຳຕັດສິນ ຫລືຄຳພິພາກສາຄະດີແພ່ງ ຂອງສານທະຫານຂັ້ນຂອງຕົນຫລືຂັ້ນລຸ່ມໃນກໍລະນີທີ່ໄດ້ບົ່ງໄວ້ໃນກົດໝາຍ;
7. ສະເໜີຖອນຄຳສະເໜີຄັດຄ້ານຂອງຕົນກ່ອນການຕັດສິນ;
8. ຮື້ຟື້ນຄະດີຄືນໃໝ່ ເມື່ອພົບເຫັນສະພາບການ ຫລືຫລັກຖານໃໝ່.

<u>**ມາດຕາ 8**</u>. ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຂັງ, ສະຖານທີ່ກັກຕົວ, ໃນເວລາປະຕິບັດໂທດຕັດອິດສະຫລະພາບ ແລະມາດຕະການບັງຄັບອື່ນໆຂອງສານທະຫານ

ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຂັງ, ສະຖານທີ່ກັກຕົວ, ໃນເວລາປະຕິບັດໂທດຕັດອິດສະຫລະພາບ ແລະ ມາດຕະການບັງຄັບອື່ນໆຂອງສານທະຫານແມ່ນການເຄື່ອນໄຫວເພື່ອເຮັດໃຫ້ການກັກຕົວ, ການກັກຂັງນາຍ ແລະພົນທະຫານ, ພະລະກອນ ແລະກຳມະກອນຂອງກອງທັບຖືກຕ້ອງຕາມກົດໝາຍ ແລະເພື່ອເຮັດໃຫ້ມີການເຄົາລົບລະບຽບການ ແລະ ເງື່ອນໄຂຂອງການກັກຕົວ, ການກັກຂັງ, ການປະຕິບັດໂທດຕັດອິດສະລະພາບ ແລະມາດຕະການບັງຄັບອື່ນໆຂອງສານທະຫານຢ່າງເຂັ້ມງວດ.

**ໃນການຕິດຕາມກວດກາດັ່ງກ່າວໄອຍະການທະຫານມີສິດ :**

1. ລົງກວດກາສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ ແລະສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານທະຫານຢ່າງເປັນລະບົບ ຫລືໃນເວລາໃດກໍໄດ້;

2. ກວດກາເບິ່ງເອກະສານກ່ຽວກັບການກັກຕົວ, ການກັກຂັງ, ການດັດສ້າງ ແລະກວດກາການປະຕິບັດມາດຕະການບັງຄັບອື່ນໆຂອງສານທະຫານ;

3. ບຸກຄົນທີ່ຖືກກັກຕົວ, ຖືກຈັບຕົວ, ຖືກກັກຂັງ, ຖືກດັດສ້າງ ຫລືຖືກປະຕິບັດມາດຕະການບັງຄັບອື່ນໆຂອງສານທະຫານ ທີ່ບໍ່ຖືກຕ້ອງຕາມກົດໝາຍນັ້ນ ຈະຖືກປ່ອຍຕົວໃນທັນທີໂດຍຄຳສັ່ງປ່ອຍຕົວຂອງໄອຍະການທະຫານ;

4. ສອບຖາມບຸກຄົນທີ່ຖືກກັກຕົວ, ຖືກຈັບຕົວ, ຖືກກັກຂັງ, ຖືກດັດສ້າງ ຫລືຖືກປະຕິບັດມາດຕະການບັງຄັບອື່ນໆຂອງສານທະຫານ ແລະພິຈາລະນາຄຳຮ້ອງຟ້ອງ, ຄຳຮ້ອງທຸກຕໍ່ການກັກຕົວ, ການກັກຂັງ ແລະການດັດສ້າງ;

5. ກວດກາການກະທຳຜິດຂອງເຈົ້າໜ້າທີ່ຕໍ່ບຸກຄົນທີ່ຖືກກັກຕົວ, ຖືກຈັບຕົວ, ຖືກກັກຂັງ, ຖືກດັດສ້າງ, ຖືກປະຕິບັດມາດຕະການບັງຄັບອື່ນໆຂອງສານທະຫານ, ສັ່ງໃຫ້ໄອຍະການທະຫານຂັ້ນລຸ່ມຂອງຕົນ ຫລືສະເໜີໃຫ້ອົງການກ່ຽວຂ້ອງກວດກາ ແລະລາຍງານສະພາບການກັກຕົວ, ການກັກຂັງ, ການດັດສ້າງ ຫລືການປະຕິບັດມາດຕະການບັງຄັບຂອງສານທະຫານໃຫ້ຕົນຊາບ;

6. ກວດກາຄຳສັ່ງຕ່າງໆຂອງຄະນະຮັບຜິດຊອບຄ້າຍຄຸມຂັງ ແລະຄ້າຍດັດສ້າງເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະລະບຽບການພາຍໃນຂອງກອງທັບ ແລະໃຫ້ຄະນະຮັບຜິດຊອບດັ່ງກ່າວ ອະທິບາຍເຫດຜົນຂອງການລະເມີດກົດໝາຍ ແລະກົດລະບຽບພາຍໃນຂອງກອງທັບ.

ຄຳສັ່ງ, ຄຳສະເໜີຄັດຄ້ານ ແລະຄຳສະເໜີຂອງໄອຍະການທະຫານກ່ຽວກັບການປະຕິບັດລະບຽບການ ແລະເງື່ອນໄຂການກັກຕົວ, ການຈັບຕົວ, ການດັດສ້າງທີ່ກຳນົດໄວ້ໃນກົດໝາຍນັ້ນແມ່ນມີຜົນບັງຄັບປະຕິບັດສຳລັບຜູ້ບັງຄັບບັນຊາ ແລະບຸກຄົນທີ່ກ່ຽວຂ້ອງ ຊຶ່ງຕ້ອງແຈ້ງຜົນຂອງການປະຕິບັດຄືນໃຫ້ໄອຍະການທະຫານຊາບພາຍໃນກຳນົດສາມສິບວັນ ນັບແຕ່ມື້ໄດ້ຮັບຄຳສັ່ງ ຫລືຄຳສະເໜີຄັດຄ້ານເປັນຕົ້ນໄປ.

**<u>ມາດຕາ 9</u>.** ການສະເໜີຄັດຄ້ານຂອງໄອຍະການທະຫານ

ໄອຍະການທະຫານມີສິດ ສະເໜີຄັດຄ້ານຄຳສັ່ງ ແລະນິຕິກຳອື່ນໆ ຂອງກອງທັບທີ່ຂັດກັບກົດໝາຍ, ສະເໜີລົບລ້າງສາເຫດ ແລະເງື່ອນໄຂທີ່ຈະພາໃຫ້ການກະທຳຜິດເກີດຂຶ້ນ. ອົງການທີ່ໄດ້ຮັບຄຳສະເໜີດັ່ງກ່າວຕ້ອງພິຈາລະນາແກ້ໄຂແລ້ວຕອບໃຫ້ໄອຍະການທະຫານຊາບ ພາຍໃນກຳນົດສາມສິບວັນ ນັບແຕ່ມື້ໄດ້ຮັບຄຳສະເໜີເປັນຕົ້ນໄປ.

**<u>ມາດຕາ 10</u>.** ໜ້າທີ່ຂອງອົງການໄອຍະການທະຫານ

ອົງການໄອຍະການທະຫານມີໜ້າທີ່ດັ່ງນີ້ :

1. ດຳເນີນການສອບສວນບາງສ່ວນ ຫລືທັງໝົດຂອງຄະດີໃດໜຶ່ງທີ່ຕົກຢູ່ໃນສິດອຳນາດຂອງຕົນຕາມກົດໝາຍໄດ້ກຳນົດໄວ້;

2. ຮັບປະກັນການສືບສວນ-ສອບສວນຄະດີອາຍາໃຫ້ຄົບຖ້ວນ, ຮອບດ້ານ, ພາວະວິໄສ ແລະວາງມາດຕະການສະກັດກັ້ນການກະທຳຜິດຢ່າງທັນການ;

3. ຕໍ່ສູ້ຕ້ານອາດຊະຍາກຳ ແລະການລະເມີດກົດໝາຍອື່ນໆ ເພື່ອຈຳກັດ ແລະລົບລ້າງບັນດາສາເຫດ ແລະເງື່ອນໄຂທີ່ຈະພາໃຫ້ການກະທຳຜິດເກີດຂຶ້ນ;

4. ຕິດຕາມກວດກາການເຄື່ອນໄຫວວຽກງານຂອງລະບົບໄອຍະການທະຫານໃນການປະຕິບັດກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ລວມທັງລັດຖະບັນຍັດສະບັບນີ້ ແລະກົດໝາຍອື່ນໆ;

5. ຄົ້ນຄວ້າ, ພິຈາລະນາຄຳສະເໜີ, ຄຳຮ້ອງຟ້ອງ, ຄຳຮ້ອງທຸກ, ຄຳຮ້ອງຂໍຕິດຕາມກວດກາຂອງບັນດາການຈັດຕັ້ງຂອງກອງທັບ, ຂອງນາຍ ແລະພົນທະຫານ,ພະລະກອນ ແລະກຳມະກອນຂອງກອງທັບ ຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນກົດໝາຍ,ວາງມາດຕະການທີ່ຈຳເປັນ ເພື່ອຟື້ນຟູສິດທີ່ໄດ້ຖືກລະເມີດ ແລະເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງການຈັດຕັ້ງ ແລະບຸກຄົນເຫລົ່ານີ້.

**<u>ມາດຕາ 11</u>.** ຜົນບັງຄັບຂອງນິຕິກຳຂອງໄອຍະການທະຫານ

ບັນດານິຕິກຳຂອງໄອຍະການທະຫານທີ່ມີຜົນບັງຄັບປະຕິບັດນັ້ນມີດັ່ງນີ້ :

1. ບັນດາຄຳສະເໜີຂອງໄອຍະການທະຫານກ່ຽວກັບການຈຳກັດ ແລະ ລົບລ້າງສາເຫດ ແລະເງື່ອນໄຂຂອງການລະເມີດກົດໝາຍ, ການທວງເອົາຄຳສັ່ງ ແລະເອກະສານຕ່າງໆ, ການສະເໜີໃຫ້ດຳເນີນການກວດກາ, ການສະເໜີເອົາຜູ້ຊ່ຽວຊານ, ການຮຽກເອົາບຸກຄົນທີ່ກ່ຽວຂ້ອງເຂົ້າມາອະທິບາຍກ່ຽວກັບການລະເມີດກົດໝາຍນັ້ນມີຜົນບັງຄັບປະຕິບັດສຳລັບກົມກອງ ແລະ ບຸກຄົນທີ່ກ່ຽວຂ້ອງ;

2. ຄຳສະເໜີໃຫ້ກວດກາ, ຄຳສະເໜີຄັດຄ້ານ, ຄຳສະເໜີໃຫ້ລົບລ້າງສາເຫດຂອງການລະເມີດກົດໝາຍ ຕ້ອງໄດ້ຮັບການຄົ້ນຄວ້າປະຕິບັດພ້ອມທັງແຈ້ງຜົນຂອງການພິຈາລະນາຄືນໃຫ້ໄອຍະການທະຫານຊາບ ພາຍໃນກຳນົດສາມສິບວັນ ນັບແຕ່ມື້ໄດ້ຮັບຄຳສະເໜີຂອງໄອຍະການທະຫານເປັນຕົ້ນໄປ.

ບົນພື້ນຖານການສັງລວມການລ່ວງລະເມີດກົດໝາຍ ໄອຍະການທະຫານຂັ້ນສູງມີສິດສະເໜີຕໍ່ລັດຖະມົນຕີກະຊວງປ້ອງກັນປະເທດ ຫລືຫົວໜ້າກົມໃຫຍ່ການເມືອງກອງທັບກ່ຽວກັບການວາງມາດຕະການແກ້ໄຂຕ່າງໆ ເພື່ອເພີ່ມທະວີນິຕິທຳ, ຄວາມເປັນລະບຽບຮຽບຮ້ອຍ ແລະການຕໍ່ສູ້ຕ້ານການລະເມີດກົດໝາຍຢູ່ໃນກອງທັບ.

## ໝວດທີ III
## ລະບົບການຈັດຕັ້ງຂອງອົງການໄອຍະການທະຫານ

**<u>ມາດຕາ 12</u>.** ລະບົບການຈັດຕັ້ງຂອງອົງການໄອຍະການທະຫານ

ອົງການໄອຍະການທະຫານປະກອບດ້ວຍ :

1. ອົງການໄອຍະການທະຫານຂັ້ນສູງ;

2. ອົງການໄອຍະການທະຫານພາກ;

3. ອົງການໄອຍະການທະຫານກອງພົນ, ໄອຍະການທະຫານແຂວງ, ກຳແພງນະຄອນ, ເຂດພິເສດ, ໄອຍະການທະຫານກອງພັນໃຫຍ່ ແລະທຽບເທົ່າ.

**<u>ມາດຕາ 13</u>.** ໂຄງປະກອບອົງການໄອຍະການທະຫານແຕ່ລະຂັ້ນ

ອົງການໄອຍະການທະຫານຂັ້ນສູງປະກອບດ້ວຍ :

- ໄອຍະການທະຫານຂັ້ນສູງ ຊຶ່ງເປັນຮອງອະທິໄອຍະການປະຊາຊົນ;
- ຮອງໄອຍະການທະຫານຂັ້ນສູງໜຶ່ງຫາສອງຄົນ;
- ພະນັກງານສອບສວນ ແລະພະນັກງານຊ່ວຍວຽກຈຳນວນໜຶ່ງ.

ອົງການໄອຍະການທະຫານພາກປະກອບດ້ວຍ :

- ໄອຍະການທະຫານພາກ;

- ຮອງໄອຍະການທະຫານພາກໜຶ່ງຄົນ;

- ພະນັກງານສອບສວນ ແລະພະນັກງານຊ່ວຍວຽກຈຳນວນໜຶ່ງ.

ອົງການໄອຍະການທະຫານກອງພົນ, ໄອຍະການທະຫານແຂວງ, ກຳແພງນະຄອນ, ເຂດພິເສດ, ໄອຍະການທະຫານກອງພັນໃຫຍ່ ແລະທຽບເທົ່າປະກອບດ້ວຍ : ໄອຍະການທະຫານກອງພົນ, ໄອຍະການທະຫານແຂວງ, ກຳແພງນະຄອນ, ໄອຍະການທະຫານເຂດພິເສດ, ໄອຍະການທະຫານກອງພັນໃຫຍ່ ແລະທຽບເທົ່າ, ພະນັກງານສອບສວນ ແລະພະນັກງານຊ່ວຍວຽກຈຳນວນໜຶ່ງ.

**ມາດຕາ 14**. ການແຕ່ງຕັ້ງພະນັກງານຂອງອົງການໄອຍະການທະຫານຂັ້ນຕ່າງໆ

ໄອຍະການທະຫານຂັ້ນສູງຖືກແຕ່ງຕັ້ງ ຫລື ປົດຕຳແໜ່ງໂດຍຄະນະປະຈຳສະພາແຫ່ງຊາດຕາມການສະເໜີຂອງອະທິໄອຍະການ.

ຮອງໄອຍະການທະຫານຂັ້ນສູງ, ໄອຍະການ ແລະຮອງໄອຍະການທະຫານພາກ, ກອງພົນ, ທະຫານແຂວງ,ກຳແພງນະຄອນ, ເຂດພິເສດ, ທະຫານກອງພັນໃຫຍ່ ແລະທຽບເທົ່າຖືກແຕ່ງຕັ້ງ ຫລືປົດຕຳແໜ່ງໂດຍອະທິໄອຍະການປະຊາຊົນຕາມການສະເໜີຂອງໄອຍະການທະຫານຂັ້ນສູງ.

ພະນັກງານສອບສວນຂອງອົງການໄອຍະການທະຫານແຕ່ລະຂັ້ນຖືກແຕ່ງຕັ້ງຫລືປົດຕຳແໜ່ງໂດຍອະທິໄອຍະການປະຊາຊົນຕາມການສະເໜີຂອງໄອຍະການທະຫານຂັ້ນສູງ.

**ມາດຕາ 15**. ສິດອຳນາດຂອງໄອຍະການທະຫານແຕ່ລະຂັ້ນ

- ໄອຍະການທະຫານຂັ້ນສູງມີສິດອຳນາດຕິດຕາມ ກວດກາການປະຕິບັດກົດໝາຍຂອງກອງທັບພາຍໃນຂອບເຂດທົ່ວປະເທດ;

- ໄອຍະການທະຫານພາກມີສິດອຳນາດຕິດຕາມກວດກາການປະຕິບັດກົດໝາຍໃນຂອບເຂດຂອງພາກທີ່ຕົນຮັບຜິດຊອບ;

- ໄອຍະການທະຫານກອງພົນ, ແຂວງ, ກຳແພງນະຄອນ, ເຂດພິເສດ, ກອງພັນໃຫຍ່ ແລະທຽບເທົ່າມີສິດອຳນາດຕິດຕາມກວດກາການປະຕິບັດກົດໝາຍໃນຂອບເຂດຂອງກອງພົນ, ແຂວງ, ກຳແພງນະຄອນ, ເຂດພິເສດ, ກອງພັນໃຫຍ່ ແລະທຽບເທົ່າທີ່ຕົນຮັບຜິດຊອບ.

## ໝວດທີ IV
## ລະບອບວິທີເຮັດວຽກຂອງໄອຍະການທະຫານ

**ມາດຕາ 16**. ວິທີເຮັດວຽກຂອງໄອຍະການທະຫານ

ໄອຍະການທະຫານດຳເນີນວຽກງານຂອງຕົນຕາມຫລັກການລວມສູນປະຊາທິປະໄຕ, ປະຕິບັດລະບອບຫົວໜ້າດຽວ,ຕົກລົງເປັນໝູ່ຄະນະ,ແບ່ງວຽກງານໃຫ້ບຸກຄົນຮັບຜິດຊອບ. ການດຳເນີນວຽກງານຕ້ອງມີແຜນການ ຊຶ່ງແບ່ງອອກເປັນແຜນການໜຶ່ງເດືອນ, ສາມເດືອນ, ຫົກເດືອນ ແລະໜຶ່ງປີ, ປະຕິບັດລະບອບຊີ້ນຳບັນຊາ, ຕັດສິນບັນຫາບົນພື້ນຖານທັດສະນະ, ຫລັກການຂອງພັກ ແລະລະບຽບກົດໝາຍຂອງລັດ, ປະຕິບັດລະບອບປະຊຸມ, ລາຍງານສ່ອງແສງ, ສະຫລຸບຖອດຖອນບົດຮຽນ ແລະຜ່ານແຜນການເຄື່ອນໄຫວວຽກງານ. ເມື່ອເຫັນວ່າມີຄວາມຈຳເປັນກໍຕ້ອງລາຍງານໃຫ້ອະທິໄອຍະການປະຊາຊົນຊາບ ເພື່ອຂໍຄວາມເຫັນ ແລະທິດຊີ້ນຳເພື່ອແກ້ໄຂຢ່າງທັນການ.

ການຕັດສິນບັນຫາຕ້ອງສົມທົບແໜ້ນລະຫວ່າງການຄົ້ນຄວ້າເນື້ອໃນສຳນວນຄະດີ, ຈົດໝາຍຄຳຮ້ອງຟ້ອງ, ຄຳຮ້ອງທຸກ, ການສືບສວນ-ສອບສວນຕົວຈິງ, ຄຳໃຫ້ການຂອງໂຈດ, ຈຳເລີຍ, ພະຍານ ແລະການ ລົງເກັບກຳຂໍ້ມູນຢູ່ສະຖານທີ່ເກີດເຫດ.

ໃນການເຄື່ອນໄຫວວຽກງານຂອງຕົນນັ້ນ ໄອຍະການຕ້ອງຢູ່ໃຕ້ການນຳພາຂອງພັກ ແລະປະສານສົມທົບກັບອຳນາດການປົກຄອງ ແລະອົງການທີ່ກ່ຽວຂ້ອງ.

## ໝວດທີ່ V
## ງົບປະມານ, ການກຳນົດຈຳນວນພົນ ແລະຕາປະທັບ

**ມາດຕາ 17**. ງົບປະມານຂອງອົງການໄອຍະການທະຫານ

ງົບປະມານຮັບໃຊ້ການເຄື່ອນໄຫວວຽກງານວິຊາສະເພາະຂອງອົງການໄອຍະການທະຫານ ເຊັ່ນ : ເຄື່ອງໃຊ້ຫ້ອງການ, ອຸປະກອນຮັບໃຊ້ສຳນັກງານ, ພາຫະນະຮັບໃຊ້, ງົບປະມານການກໍ່ສ້າງພື້ນຖານ ແລະເງິນໃຊ້ຈ່າຍດ້ານວິຊາການແມ່ນຂຶ້ນກັບງົບປະມານຂອງອົງການອະທິໄອຍະການປະຊາຊົນ.

ສຳລັບເງິນນະໂຍບາຍຕ່າງໆເຊັ່ນ : ເງິນເດືອນ, ເຄື່ອງນຸ່ງຫົ່ມ, ການອຸດໜູນເວລາອອກການ, ເບັ້ຽບຳນານ, ເງິນບຳເນັດ ແລະສະຫວັດດີການສັງຄົມອື່ນໆ ແມ່ນຂຶ້ນກັບງົບປະມານຂອງກະຊວງປ້ອງກັນປະເທດ.

**ມາດຕາ 18**. ການກຳນົດຈຳນວນພົນ

ການກຳນົດຈຳນວນພົນຂອງອົງການໄອຍະການທະຫານລວມທັງກົງຈັກຊ່ວຍວຽກ ແມ່ນອະທິໄອຍະການປະຊາຊົນເປັນຜູ້ຕົກລົງຕາມການສະເໜີຂອງໄອຍະການທະຫານຂັ້ນສູງ.

**ມາດຕາ 19**. ຕາປະທັບ

ອົງການໄອຍະການທະຫານແຕ່ລະຂັ້ນມີຕາປະທັບຂອງຕົນ ຊຶ່ງປະກອບດ້ວຍເຄື່ອງໝາຍຂອງກອງທັບ ແລະຊື່ຂອງອົງການໄອຍະການທະຫານຂັ້ນຂອງຕົນ.

## ໝວດທີ່ VI
## ບົດບັນຍັດສຸດທ້າຍ

**ມາດຕາ 20**. ຜົນສັກສິດ

ລັດຖະບັນຍັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 1 ເດືອນ 2 ປີ 1996.

ປະທານປະເທດ ແຫ່ງ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ໜູຮັກ ພູມສະຫວັນ